## ການຄັດເລືອກພື້ນທີ່ປູກຜັກ

### 1. ສະພາບພື້ນທີ່:

ຄວນມີຄວາມເໝາະສົມ ຮາບພຽງດີ ຫຼື ອຽງເລັກນ້ອຍ ພື້ນທີ່ໃກ້ກັບແຫຼ່ງນ້ຳ ເພື່ອໃຫ້ປູກໄດ້ຕະຫຼອດປີ.

### 2. ລັກສະນະຂອງດິນ:

ຄວນເປັນດິນທີ່ອຸດົມສົມບູນດີ ຄວາມເປັນກົດເປັນດ່າງ(pH) ຂອງດິນຄວນຢູ່ລະຫວ່າງ 6-6.5 ແລະ ລະບາຍນ້ຳໄດ້ດີ.

### 3. ແຫຼ່ງນ້ຳ:

ນ້ຳຖືວ່າເປັນປັດໃຈສຳຄັນ ໃນການປູກຜັກ ດັ່ງນັ້ນ ພື້ນທີ່ໆ ເໝາະສົມໃນການປູກຜັກ ຕ້ອງຢູ່ໃກ້ແຫຼ່ງນ້ຳ, ຫວ້ຍນ້ຳລຳເຊ, ບຶງ, ໜອງ, ນ້ຳບາດານ ແລະ ຕ້ອງມີນ້ຳພຽງພໍໃຊ້ໄດ້ຕະຫຼອດປີ.

## ຊະນິດຂອງນ້ຳຖ້ວມ

ນ້ຳຖ້ວມມີ 3 ຊະນິດຄື: (1) ນ້ຳຖ້ວມໄຫຼ ຈະໃຊ້ເວລາປະມານ 1-2 ອາທິດ, ສາເຫດຫຼັກ ເກີດຈາກຝົນຕົກໜັກເຮັດໃຫ້ເກີດນ້ຳປ່າໄຫຼຫຼາກລົງສູ່ແມ່ນ້ຳ (2) ນ້ຳຖ້ວມຂັງ ໃຊ້ເວລາແຕ່ 3-6 ອາທິດ, ສາເຫດເກີດຈາກຝົນຕົກໜັກ ເຮັດໃຫ້ນ້ຳລົ້ນຕະລິ່ງເຂົ້າຖ້ວມທົ່ງນາບວກກັບນ້ຳປ່າໄຫຼຫຼາກ, (3) ນ້ຳຖ້ວມເລິກເປັນການຖ້ວມ ທີ່ແກ່ຍາວຫຼາຍກວ່າ 1 ເດືອນ ເຊິ່ງໃນເຂດນີ້ນິຍົມນຳໃຊ້ເຂົ້າລອຍນ້ຳ.



## ການເຮັດເຮືອນຮົ່ມເພື່ອປູກຜັກລະດູຝົນ

### 1. ເຮືອນຮົ່ມຫຼັງຄາແບບບໍ່ກົ່ງ:

ຈຸດດີຂອງຫຼັງຄາແບບນີ້ ແມ່ນໂຄງຫລັງຄາ ແຂງແຮງດີ ແຕ່ຕ້ອງໄດ້ໃຊ້ໄມ້ຂ້າວໄມ້ໃຜ່ຈຳນວນຫລາຍ ເພື່ອບໍ່ໃຫ້ນ້ຳຄ້າງເທິງແຜ່ນຢາງ.



### 2. ເຮືອນຮົ່ມຫຼັງຄາແບບໂຄ້ງ

ຈຸດດີຂອງຫຼັງຄາແບບນີ້ ແມ່ນນ້ຳຝົນຈະບໍ່ຄ້າງ ເທິງຫລັງຄາ ດັ່ງນັ້ນ, ອາຍຸການໃຊ້ງານຂອງແຜ່ນຢາງໄດ້ຫລາຍລະດູການ



## ການກຽມໜານປູກຜັກ

ການປູກຜັກລະດູຝົນ ຕ້ອງໄດ້ເຮັດໜານຜັກ ທີ່ຂ້ອນຂ້າງ ສູງກ່ວາໜານຜັກ ໃນຍາມແລ້ງ ເພາະວ່າຫຼີກລ່ຽງ ຄວາມຊຸ່ມ ຂອງນ້ຳຝົນໃນດິນ ແລະ ເພື່ອບໍ່ໃຫ້ຮາກຜັກເນົ່າເປື່ອຍ, ຫຼັງຈາກຂຸດດິນຕາກແດດ 7 ວັນແລ້ວ ແມ່ນເລີ່ມເຮັດໜານຜັກ ຊຶ່ງຄວນຍົກຄູສູງ 20-30 ຊມ ແລ້ວໃສ່ຝຸ່ນບົ່ມຮອງພື້ນປະມານ 2 ກິໂລຕໍ່ ມ$^2$, ໄລຍະຫ່າງທີ່ເໝາະສົມ ໃນການປູກຄວນມີໄລຍະຫ່າງຕົ້ນຕໍ່ຕົ້ນ 20 ຊມ ແລະ ແຖວຕໍ່ແຖວ 20 ຊມ.





## ການບົວລະບັດຮັກສາ

ການປູກຜັກລະດູຝົນ ມີຄວາມຈຳເປັນ ຕ້ອງໄດ້ເບິ່ງແຍງເປັນພິເສດ ກວ່າການປູກຜັກໃນລະດູແລ້ງ ໂດຍສະເພາະ ຕ້ອງໄດ້ລະບາຍນ້ຳ ອອກຈາກໜານຜັກ ເພື່ອປ້ອງກັນ ບໍ່ໃຫ້ມີຄວາມຊຸ່ມຫລາຍ ໃນໜານຜັກປ້ອງກັນຜັກເປື່ອຍ ຄວນໃສ່ຝຸ່ນເພີ່ມ ຫຼັງປູກໄດ້ປະມານ 10 ວັນ ເພື່ອເຮັດໃຫ້ດິນ ມີຄວາມອຸດົມສົມບູນຢູ່ຕະຫຼອດ ແລະ ໃຫ້ຜັກມີການຈະເລີນເຕີບໂຕດີ, ນອກນັ້ນ ຕ້ອງໄດ້ຫຼົກຫຍ້າ ແລະ ກຳຈັດວັດຊະພືດອື່ນໆ ຢູ່ໃນໜານຜັກ ເພາະວ່າ ວັດຊະພືດຈະຍາດກິນສານອາຫານຈາກຜັກ.

ຖ້າສັງເກດເຫັນວ່າ ດິນໜານຜັກແໜ້ນເກີນໄປ ຊາວກະສິກອນຄວນພວນດິນ ເພື່ອໃຫ້ອາກາດສາມາດເຂົ້າໄປໃນດິນ ເຮັດໃຫ້ຮາກຂອງພືດຜັກມີການຂະຫຍາຍໂຕດີ.

ຂໍ້ຄວນລະວັງ ໃນການພວນດິນ ໃຫ້ໃຊ້ໄມ້ຈົ້ມດິນອ້ອມຂ້າງຕົ້ນຜັກ ຄວາມເລິກປະມານ 5 ຊມ ແລະ ຄວນລະວັງຢ່າໃຫ້ຖືກຮາກຜັກໂດຍກົງ ເພາະຈະເປັນຜົນກະທົບ ຕໍ່ການຈະເລີນເຕີບໂຕຂອງຜັກໄດ້.

ຂໍ້ຄວນເອົາໃຈໃສ່ ຄວນປູກ ຕົ້ນດອກດາວເຮືອງ ອ້ອມສວນຜັກ ເພື່ອປ້ອງກັນແມງໄມ້ມາລົບກວນ.

## ການຫົດນ້ຳ

ຄວນຫົດນ້ຳໃຫ້ຊຸ່ມພຽງພໍ ເຊົ້າ ແລະ ແລງ ໃນເວລາຜັກຍັງນ້ອຍ ຫຼືກຳລັງປົ່ງໃໝ່ໆ ຄວນໃຊ້ຫົວດອກບົວ ທີ່ມີຟອຍນ້ຳນ້ອຍໆ ເພື່ອປ້ອງກັນ ບໍ່ໃຫ້ຜັກລົ້ມຕິດດິນ ອາດຈະເຮັດໃຫ້ດິນຕິດໃບຜັກ ແລະຈະເຮັດໃຫ້ຜັກຈະເລີນເຕີບໂຕຊ້າ.



## ການພວນດິນໜານຜັກ:




### ຂໍ້ແນະນຳ

# ການປູກຜັກໃນລະດູຝົນ

ມິຖຸນາ 2013




NTPC
Powering the Future

**ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ**
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ
ໜ່ວຍງານຟື້ນຟູຊີວິດການເປັນຢູ່